Minnesota Department of Education

# ຄຳຖາມ ແລະ ຄຳຕອບກ່ຽວກັບ MTAS ໃນວິຊາຄະນິດສາດ, ການທັດອ່ານ ແລະ ວິທະຍາສາດ

## MTAS ແມ່ນຫຍັງ?

ການສອບເສັງທັກສະຂອງການສຶກສາມິນິໂຊຕາ (Minnesota Test of Academic Skills – MTAS) ແມ່ນການປະເມີນຜົນແບບມີທາງເລືອກ ໂດຍອີງໃສ່ມາດຕະຖານຂອງການບັນລຸເປົ້າໝາຍແບບມີທາງເລືອກສຳລັບນັກຮຽນທີ່ມີບັນຫາທາງດ້ານການຮັບຮູ້ທີ່ສຳຄັນ. ມັນເປັນສ່ວນໜຶ່ງຂອງໂຄງການປະເມີນຜົນມິນິໂຊຕາ.

MTAS ວັດແທກທັກສະທາງດ້ານການອ່ານ, ຄະນິດສາດ ແລະ ວິທະຍາສາດ ທີ່ເຊື່ອມຕໍ່ໃສ່ກັບຫລັກສູດຂອງການສຶກສາທົ່ວໄປ. ທັກສະເຫຼົ່ານີ້ ສະແດງໃຫ້ເຫັນຄວາມຄາດຫວັງທີ່ສູງສຳລັບນັກຮຽນທີ່ມີພິການທາງດ້ານການຮັບຮູ້ ທີ່ສຳຄັນ, ແຕ່ວ່າວິທີການສອບເສັງຂອງການວັດແທກທັກສະເຫລົ່ານີ້ ແມ່ນຖືວ່າມີຄວາມຫຍຸ້ງຍາກໜ້ອຍກ່ວາລາຍການທີ່ຢູ່ໃນການປະເມີນຜົນແບບຮອບດ້ານຂອງມິນິໂຊຕາ (Minnesota Comprehensive Assessments – MCA).

## ເປົ້າໝາຍຂອງ MTAS ແມ່ນຫຍັງ?

MTAS ແມ່ນໜຶ່ງໃນວິທີການສອບເສັງທີ່ຖືກນຳໃຊ້ໃຫ້ໄດ້ການວັດແທກຄວາມໜ້າເຊື່ອຖືຂອງໂຮງຮຽນໃນຣັຖບານກາງຂອງກົດໝາຍວ່າດ້ວຍການສຶກສາຂອງໂຮງຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ (Elementary and Secondary Education Act – ESEA) ທີ່ອາດຈະໃຊ້ແທນ MCA.

ນັກຮຽນມີຄວາມຮັບຜິດຊອບໃນການປະຕິບັດໃຫ້ໄດ້ຕາມຄວາມຕ້ອງການທາງດ້ານການສຶກສາຂອງນັກຮຽນທຸກຄົນ. ນັກຮຽນບາງຄົນບໍ່ສາມາດບັນລຸລະດັບຄວາມເກັ່ງຕາມຄາດໝາຍຂອງຊັ້ນຮຽນ ຍ້ອນຄວາມພິການຂອງພວກເຂົາ, ແລະ MTAS ຊ່ວຍຮັບປະກັນວ່າໂຮງຮຽນສະໜອງການເຂົ້າເຖິງບົດສອນວິຊາການອ່ານ, ຄະນິດສາດ, ທັດອ່ານ ແລະ ວິທະຍາສາດ ທີ່ເຊື່ອມຕໍ່ໃສ່ກັບມາດຕະຖານການສຶກສາຂອງມິນິໂຊຕາ (Minnesota Academic Standards) ໃນລະດັບຊັ້ນຮຽນຂອງນັກຮຽນໃນຂອບເຂດທີ່ເໝາະສົມ.

ໂປຣແກຣມການສຶກສາສະເພາະບຸກຄົນ (IEP) ຂອງລູກຫຼານທ່ານ ອາດຈະສະແດງໃຫ້ເຫັນຄວາມຈຳເປັນສຳລັບການສິດສອນພິເສດທັງທັກສະທາງດ້ານໜ້າການປະຕິບັດງານ ແລະ ການສຶກສາ. MTAS ຖືກກຳນົດຂຶ້ນເພື່ອວັດແທກຄວາມກ້າວໜ້າຂອງນັກຮຽນຢູ່ໃນທັກສະການສຶກສາ.

## ແມ່ນໃຜຕ້ອງເຂົ້າຮ່ວມການສອບເສັງນີ້?

ນັກຮຽນທຸກຄົນໃນໂຮງຮຽນຂອງຣັຖະບານເຂົ້າຮ່ວມໃນໂຄງການປະເມີນຜົນທົ່ວຣັຖ. ການສອບເສັງແມ່ນມີໄວ້ສຳລັບຊັ້ນຮຽນສະເພາະໃນວິຊາທັດອ່ານ (3-8 ແລະ 10), ຄະນິດສາດ (3-8 ແລະ 11) ແລະ ວິທະຍາສາດ (5, 8 ແລະ ເທື່ອໜຶ່ງໃນໂຮງຮຽນມັດທະຍົມຕອນປາຍ).

MTAS ຊ່ວຍໃຫ້ທີມ IEPs ຊຶ່ງເປັນຜູ້ທີ່ມີຄວາມພິການທາງດ້ານການຮັບຮູ້ທີ່ສຳຄັນທີ່ສຸດ. ນັກຮຽນອາດຈະສອບເສັງ MTAS ໃນວິຊາທັດອ່ານ, ຄະນິດສາດ ແລະ/ຫຼື ວິທະຍາສາດ ແທນ MCA. ທີມ IEP ມີໜ້າທີ່ຮັບຜິດຊອບໃນການກຳນົດວ່ານັກຮຽນເຂົ້າຮ່ວມໃນ ການສອບເສັງທົ່ວຣັຖໄດ້ແນວໃດ.

ເງື່ອນໄຂຂອງການໄດ້ຮັບສິດ MTAS ສະໜອງຄູ່ມືໃຫ້ແກ່ທີມ IEP ເພື່ອຊ່ວຍໃຫ້ພວກເຂົາກຳນົດວ່າໃຜຄວນຈະເຂົ້າຮ່ວມ MTAS. ເຂົ້າເບິ່ງເງື່ອນໄຂຂອງການໄດ້ຮັບສິດ MTAS (MTAS Eligibility Requirements) ຢູ່ເວັບໄຊທ໌ຂອງ MDE ເພື່ອເອົາຂໍ້ມູນເພີ່ມເຕີມ. (ເຂົ້າໄປທີ່ Districts, Schools and Educators > Statewide Testing > Minnesota Tests.)

## ຈະເຮັດແນວໃດຈຶ່ງຈະສາມາດຜ່ານການສອບເສັງ?

ນັກຮຽນຜູ້ທີ່ບໍ່ຜ່ານການສອບເສັງ ຫຼື ສອບເສັງ MTAS ຕົກ, ແລະ ຈະບໍ່ຖືກນຳໃຊ້ເພື່ອກຳນົດວ່າ ລູກຫຼານຂອງທ່ານສາມາດກ້າວໜ້າໃນຊັ້ນຮຽນຕໍ່ໄປ. ນັກຮຽນແຕ່ລະຄົນໄດ້ຮັບຄະແນນທີ່ນອນຢູ່ໜຶ່ງໃນສີ່ຂອງລະດັບຂອງການບັນລຸເປົ້າໝາຍບໍ່ໄດ້ຕາມມາດຕະຖານຄວາມສຳເລັດທີ່ຈັບສະຫຼັບ, ບາງສ່ວນຕາມມາດຕະຖານຄວາມສຳເລັດຈັບສະຫຼັບ, ພົບຄວາມສຳເລັດທາງເລືອກມາດຕະຖານ, ໄດ້ເກີນມາດ ຕະຖານຄວາມສຳເລັດທີ່ທາງເລືອກ.

## ຮູບແບບຂອງການສອບເສັງແມ່ນແນວໃດ?

MTAS ແມ່ນການປະເມີນຜົນງານທີ່ບໍລິຫານຈັດການໂດຍຄູສອນຂອງນັກຮຽນ (ຫຼື ພະນັກງານເຂດຂອງໂຮງຮຽນຄົນອື່ນ) ແບບໂຕ-ຕໍ່-ໂຕ. ວິທີການສອບເສັງສະແດງຜົນງານ ແມ່ນການສຶກສາທີ່ຊັດເຈນ ແລະ ວັດແທກທັກສະຂອງລູກຫຼານຂອງທ່ານໃນວິຊາຫັດອ່ານ, ຄະນິດສາດ ແລະ ວິທະຍາສາດ. ວິທີການສອບເສັງຢູ່ໃນ MTAS ຍາກໜ້ອຍກ່ວາຄຳຖາມໃນການສອບເສັງຂອງ MCA ຫຼາຍ. ວິທີການສອບເສັງ ອາດຈະແມ່ນການອ່ານແຮງໆ ແລະ ສະແດງດ້ວຍຮູບພາບ, ສັນຍາລັກ ແລະ/ຫຼື ວັດຖຸ ເພື່ອເຮັດໃຫ້ນັກຮຽນສາມາດເຂົ້າເຖິງໄດ້ງ່າຍຂຶ້ນກ່ວາເກົ່າ. ນັກຮຽນສາມາດຕອບໄດ້ຫຼາຍວິທີ (ເຊັ່ນ ເວົ້າ, ຊີ້ ຫຼື ໃຊ້ການຈ້ອງດ້ວຍຕາ) ເພື່ອສະແດງໃຫ້ເຫັນວ່າພວກເຂົາຮູ້ຈັກຄຳຕອບ.

## ທັກສະໃດທີ່ວັດແທກຢູ່ໃນ MTAS?

ຂໍ້ກຳນົດສະເພາະຂອງການສອບເສັງ MTAS ສຳລັບວິຊາຫັດອ່ານ, ຄະນິດສາດ ແລະ ວິທະຍາສາດ ໃຫ້ຂໍ້ມູນສະເພາະທີ່ສຸດກ່ຽວກັບທັກສະທີ່ພວກເຂົາຖືກປະເມີນຢູ່ໃນ MTAS. ເບິ່ງຂໍ້ກຳນົດສະເພາະຂອງການສອບເສັງຢູ່ເວັບໄຊທ໌ຂອງ MDE. (ເຂົ້າໄປທີ່ Districts, Schools and Educators > Statewide Testing > Test Specifications.)

ຕົວຢ່າງຂອງລາຍການສອບເສັງຊ່ວຍໃຫ້ນັກຮຽນຄຸ້ນເຄີຍກັບຮູບແບບຂອງການສອບເສັງ ແລະ ໃຫ້ຕົວຢ່າງຂອງປະເພດຄຳຖາມທີ່ຢູ່ໃນການສອບເສັງ. ໄປທີ່ໜ້າລາຍການການຕົວຢ່າງຢູ່ໃນເວັບໄຊທ໌ MDE ຂໍ້ມູນກ່ຽວກັບການເຂົ້າເຖິງລາຍການຕົວຢ່າງ ແລະ ການສອນພິເສດໃຫ້ນັກຮຽນ. (ເຂົ້າໄປທີ່ Districts, Schools and Educators > Statewide Testing > Item Samplers.)

### *ການອ່ານ*

ວິຊາຫັດອ່ານຂອງ MTAS ລວມມີ ວິທີການສອບເສັງສະແດງຜົນງານ ທີ່ວັດແທກຄວາມເຂົ້າໃຈຂອງນັກຮຽນທາງດ້ານວັນນະຄະດີເລື່ອງສັ້ນ ແລະ ເນື້ອເລື່ອງທີ່ບໍ່ແມ່ນວັນນະຄະດີ. ເນື້ອເລື່ອງ ແລະ ວິທີການສອບເສັງອາດຈະມີຮູບພາບ, ສັນຍາລັກ ແລະ/ຫຼື ສິ່ງຂອງມາປະກອບ. ນັກຮຽນທີ່ສອບເສັງວິຊາຫັດອ່ານຂອງ MTAS ສາມາດຟັງເລື່ອງ, ອ່ານເລື່ອງພ້ອມກັບຄູສອນ ຫຼື ອ່ານເລື່ອຢ່າງອິດສະລະ.

### *ວິຊາຄະນິດສາດ*

ວິຊາຄະນິດສາດ MTAS ລວມມີ ວິທີການສອບເສັງສະແດງຜົນງານ ທີ່ວັດແທກຄວາມເຂົ້າໃຈຂອງນັກຮຽນທາງດ້ານທັກສະໃນການຄຳນວນ ແລະ ເຫດຜົນທາງດ້ານຄະນິດສາດ. ວິທີຂອງການສອບເສັງ ອາດຈະສະໜັບສະໜູນດ້ວຍ ຮູບແຕ້ມແບບເປັນເສັ້ນ, ຮູບພາບ ແລະ/ຫຼື ສິ່ງຂອງ (ເຊັ່ນ ຮູບຮ່າງລັກສະນະ) ທີ່ຊ່ວຍໃຫ້ນັກຮຽນເຂົ້າໃຈວ່າລາວກຳລັງບອກໃຫ້ເຮັດຫຍັງ.

### *ວິຊາວິທະຍາສາດ*

ວິຊາວິທະຍາສາດ MTAS ລວມມີ ວິທີການສອບເສັງສະແດງຜົນງານທີ່ວັດແທກຄວາມເຂົ້າໃຈຂອງນັກຮຽນກ່ຽວກັບແນວຄວາມຄິດ ແລະ ຂະບວນການທາງວິທະຍາສາດ. ວິທີການສອບເສັງສະແດງຜົນງານ ອາດຈະຖືກສະໜັບສະໜູນດ້ວຍ ຮູບແຕ້ມແບບເປັນເສັ້ນ, ຮູບພາບ ແລະ/ຫຼື ວັດຖຸ (ເຊັ່ນ ເຄື່ອງມື) ເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈວ່າລາວກຳລັງຖືກບອກໃຫ້ເຮັດຫຍັງ.

## ຂ້ອຍສາມາດເບິ່ງຜົນການສອບເສັງຂອງ MTAS ໃຫ້ແກ່ ລູກຫຼານ, ໂຮງຮຽນ ແລະ ເຂດຂອງຂ້ອຍໄດ້ແນວໃດ?

ໂຮງຮຽນຂອງທ່ານຈະໄດ້ຮັບບົດລາຍງານຂອງນັກຮຽນແຕ່ລະຄົນສຳລັບລູກຫຼານຂອງທ່ານ ແລະ ຈະໃຫ້ຂໍ້ມູນນີ້ແກ່ທ່ານ. ບົດລາຍງານນີ້ສະແດງໃຫ້ເຫັນວ່າ ຄະແນນຂີດເຂດທັກສະສະເພາະແຕ່ລະວິຊາ ແລະ ຄະແນນໂດຍລວມໃນແຕ່ລະວິຊາຂອງລູກທ່ານ, ເດັກຂອງທ່ານປະຕິບັດການສອບເສັງແຕ່ລະວິຊາໄດ້ແນວໃດ ແລະ ສະແດງໃຫ້ເຫັນລະດັບຂອງການບັນລຸເປົ້າໝາຍຂອງເດັກຂອງທ່ານຢູ່ MTAS. ໂຮງຮຽນສາມາດໃຊ້ຂໍ້ມູນນີ້ ເພື່ອຊ່ວຍໃຫ້ພວກເຂົາຕີລາຄາປະສິດທິຜົນຂອງການສິດສອນ, ແລະ ທີມ IEP ຍັງອາດຈະເລືອກໃຊ້ຂໍ້ມູນນີ້ ເປັນການວັດແທກອັນໜຶ່ງຂອງຄວາມກ້າວໜ້າຂອງການສຶກສາ.

ຜົນຂອງການສອບເສັງສຳລັບໂຮງຮຽນ ແລະ ເຂດ ແມ່ນມີໃຫ້ຢູ່ໝວດບັດລາຍງານມິນິໂຊຕາ (Minnesota Report Card section) ຂອງສູນຂໍ້ມູນ (Data Center) ຢູ່ເວັບໄຊທ໌ຂອງ MDE. ໄປທີ່ໝວດ Minnesota Report Card ຂອງເວັບໄຊທ໌ MDE. (ເຂົ້າໄປທີ່ Data Center > Minnesota Report Card.)

---


*ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງຕິດຕໍ່ຫາ:*

Statewide Testing
mde.testing@state.mn.us

Minnesota Department of Education
1500 Highway 36 West
Roseville, MN 55113-4266
http://education.state.mn.us



*ກັນຍາ 2016*